# SIREN ບົດລາຍງານເຫດການ

**ຍຸດທະສາດການ ໂຕ້ຕອບດ້ວຍເຄືອຂ່າຍ ຂໍ້ມູນຂ່າວສານ (SIREN)**

**ໂຄງການ ເຄືອຂ່າຍຕ້ານການຄ້າມະນຸດ ຂອງອົງການ ສປຊ (UNIAP): ໄລຍະ III**

**ບາງກອກ, ປະເທດໄທ**

29 ກຸມພາ 2008 GMS-04

# ສະພາບການຕ້ານການຄ້າມະນຸດ: ເຄື່ອງມືສໍາລັບຜູ້ໃຫ້ທຶນ

*ສະພາບລວມ: ໃນວັນທີ 12 ພະຈິກ 2007, ໂຄງການ UNIAP ແລະ MTV ໄດ້ເຕົ້າໂຮມກັນກັບບັນດາຄູ່ຮ່ວມງານຈາກອົງ ການ UNESCO, IOM, ໂຄງການ ARTIP, ແລະ ອົງການ ILO ເພື່ອສະໜັບສະໜູນການຈັດງານ ໜຶ່ງມື້ເຕັມໂດຍນໍາໃຊ້ເຕັກໂນໂລຊີທັນສະໄໝ ໃນການລາຍງານໂດຍຫຍໍ້ ເຊິ່ງມີຈຸດປະສົງເພື່ອສະໜອງການລາຍງານແບບຄົບຖ້ວນຮອບ ດ້ານກ່ຽວກັບການຕ້ານການຄ້າມະນຸດໃຫ້ແກ່ຜູ້ໃຫ້ທຶນ, ອົງການຈັດຕັ້ງປະຕິ ບັດ, ຜູ້ປະຕິບັດຕົວຈິງ, ແລະ ນັກວິ ຊາການ. ຜ່ານຮູບການເຮັດວຽກຮ່ວມກັບບັນດາຄູ່ຮ່ວມງານໃນລະດັບປະເທດແລະສາກົນ ແລະ ການນໍາໃຊ້ຮູບແບບແລະສື່ການນໍາສະເໜີທີ່ເປັນນະວະກໍາໃໝ່, ກອງປະຊຸມວິຊາການຄັ້ງນີ້ ໄດ້ເນັ້ນໜັກບັນຫາຮີບດ່ວນແລະຊ່ອງຫວ່າງທີ່ມີໃນວຽກງານຕ້ານການຄ້າມະນຸດ, ແລະ ບາງວິທີການຕອບໂຕ້ທີ່ມີປະສິດທິຜົນຫຼາຍກວ່າເດີມທີ່ໄດ້ຮັບການກໍານົດໄວ້ ແລ້ວ - ຫຼື ທີ່ຄວນຈະຖືກກໍານົດ.*

*ເຫດການຄັ້ງນີ້ ໄດ້ຮັບປະໂຫຍດຈາກຄວາມຮູ້ຄວາມຊໍານານຂອງບັນດາຄູ່ຮ່ວມງານຕ່າງໆ ໃນຂົງເຂດຄວາມຊ່ຽວຊານຂອງເຂົາເຈົ້າ ໂດຍມີຈຸດສຸມໃສ່ຂົງເຂດສະເພາະຂອງວຽກງານຕ້ານການຄ້າມະນຸດແລະການກິດຂີ່ຂູດຮີດ. ໄດ້ມີການສ້າງບົດເລື່ອງຫຍໍ້ແລະເອກະສານສັງລວມຕ່າງໆກ່ຽວກັບຜູ້ຖືກເຄາະຮ້າຍເພື່ອຮັບໃຊ້ກອງປະຊຸມຄັ້ງນີ້ ໂດຍໄດ້ຮັບການສະໜັບສະໜູນຈາກໂຄງການ MTV EXIT ASIA ເຊິ່ງເປັນໂຄງການທີ່ໄດ້ຮັບທຶນຊ່ວຍເຫຼືອຈາກອົງການ USAID, ໂດຍສື່ດັ່ງກ່າວແມ່ນຕ້ອງການຢາກສ່ອງແສງໃຫ້ເຫັນບັນຫາຕ່າງໆ, ຄວາມຫຍຸ້ງຍາກຂອງຜູ້ຖືກເຄາະຮ້າຍ ແລະ ສະ ພາບການກົດຂີ່ຂູດຮີດທີ່ພວກເຮົາຜະເຊີນໃນວຽກງານການຕ້ານການຄ້າມະນຸດໃນຍຸກປະຈຸບັນ. ໄດ້ມີການນໍາໃຊ້ຮູບ ການ ການສົນທະນາໃນຮູບແບບຄືກັນກັບການສົນທະນາຢູ່ "ສາລາເມືອງ/ຫ້ອງການປົກຄອງເມືອງ" ເພື່ອຊຸກຍູ້ໃຫ້ມີການມີສ່ວນຮ່ວມຢ່າງຟົດຟື້ນແລະຕໍ່ເນື່ອງຈາກຜູ້ເຂົ້າຮ່ວມ. ການຄົ້ນຄວ້າສົນທະນາໃນທ້າພາກ ໄດ້ສຸມໃສ່ປະເດັນດັ່ງຕໍ່ໄປນີ້:*

- ► *ການທັບມ້າງຄວາມເຂົ້າໃຈຜິດທີ່ພົວພັນກັບບັນຫາການຄ້າມະນຸດ;*
- ► *ການສ້າງຄວາມເຂົ້າໃຈຕໍ່ຜູ້ຖືກເຄາະຮ້າຍ;*
- ► *ການສ້າງຄວາມເຂົ້າໃຈຕໍ່ອາດຊະຍາກໍາແລະອາດຊະຍາກອນ;*

► *ການກຳນົດເປົ້າໝາຍແລະການປ້ອງກັນການຄ້າມະນຸດ ແລະ*
► *ການກຳນົດແຜນງານແລະການໃຫ້ທຶນຕໍ່ວຽກງານທີ່ເປັນບູລິມະສິດ.*

*ຫຼັງຈາກການສົນທະນາໃນພາກເຫຼົ່ານີ້ແລ້ວ, ກໍ່ຕິດຕາມດ້ວຍການສົນທະນາກ່ຽວກັບວິທີທີ່ຜູ້ໃຫ້ທຶນອາດຈະນຳໃຊ້ຂໍ້ມູນຂ່າວສານດັ່ງກ່າວນີ້ ເພື່ອຕັດສິນບັນຫາໃນລັກສະນະທີ່ມີຂໍ້ມູນຄົບຖ້ວນຂຶ້ນກວ່າເດີມ.*

## *ເປັນຫຍັງເຫດການຄັ້ງນີ້ຈຶ່ງມີຄວາມສຳຄັນ?*

ຍິ່ງຜ່ານໄປຫຼາຍປີ, ບັນຫາການຄ້າມະນຸດ ຍິ່ງນັບມື້ນັບມີຄວາມສະຫຼັບສັບຊ້ອນ ແລະ ບາງຄັ້ງກໍ່ມີລັກສະນະສັບສົນສຳ ລັບຫຼາຍພາກສ່ວນ ເຊິ່ງໃນນັ້ນລວມທັງຜູ້ທີ່ເຮັດວຽກແກ້ໄຂບັນຫາດັ່ງກ່າວ ແລະ ຜູ້ໃຫ້ທຶນຊ່ວຍເຫຼືອ ການຕອບໂຕ້ຕໍ່ບັນ ຫາດັ່ງກ່າວ. ໃນເວລາດຽວກັນ, ເມື່ອເຮົາຮຽນຮູ້ຫຼາຍຂຶ້ນຈາກປະສົບການຂອງພວກເຮົາ, ຄວາມເຂົ້າໃຈຂອງພວກເຮົາຕໍ່ບັນຫາການຄ້າມະນຸດ ແລະ ສິ່ງຈຳເປັນໃນການແກ້ໄຂບັນຫາດັ່ງກ່າວ ກໍ່ສືບຕໍ່ວິວັດໄປເລື້ອຍໆ. ຈຳເປັນຕ້ອງມີກອງປະ ຊຸມໃນລັກສະນະນີ້ຫຼາຍຂຶ້ນ ເພື່ອສ້າງຄວາມຮັບຮູ້ໃຫ້ທັນກັບບັນດາການປ່ຽນແປງຕ່າງໆທີ່ກຳລັງເກີດຂຶ້ນໃນຂະແໜງນີ້ ແລະ ເພື່ອຊ່ວຍເຮັດໃຫ້ຫົວຂໍ້ດັ່ງກ່າວນີ້ ມີຄວາມກະທັດຮັດຂຶ້ນ. ບົດລາຍງານສະບັບນີ້ ສະໜອງບົດສັງລວມກ່ຽວກັບບັນ ດາຂໍ້ຄວາມສຳຄັນທີ່ໄດ້ຈາກເຫດການເມື່ອເດືອນພະຈິກທີ່ຜ່ານມາເວົ້າລວມ, ເວົ້າສະເພາະຈາກການສົນທະນາໃນແຕ່ລະພາກ.

**ຂໍ້ຄວາມສຳຄັນ**:

1. ການຄ້າມະນຸດໃນພາກພື້ນ ສ່ວນຫຼາຍແມ່ນເພື່ອກົດຂີ່ຂູດຮີດແຮງງານ. ຄວາມພະຍາຍາມຕ້ານ ການຄ້າມະນຸດຄວນແກ້ໄຂ**ທັງການກົດຂີ່ຂູດຮີດແຮງງານແລະທາງເພດ,** ໂດຍມີຄວາມເຂົ້າໃຈວ່າ: ການກົດຂີ່ຂູດຮີດດັ່ງກ່າວເຮັດໃຫ້ມະນຸດບໍ່ວ່າ**ຜູ້ຊາຍ, ແມ່ຍິງ ຫຼື ເດັກນ້ອຍ**ກາຍເປັນຜູ້ຖືກເຄາະຮ້າຍ.
2. ບັນດາກິດຈະກຳຊ່ວຍເຫຼືອຄວນຕັ້ງຢູ່**ບົນພື້ນຖານຂໍ້ມູນຕົວຈິງ**ແລະ**ເລັງເປົ້າໝາຍ**ໃສ່ປາຍທາງທີ່ມີການກົດຂີ່ຂູດຮີດຫຼາຍສຸດ ແລະ ບັນດາຊຸມຊົນທີ່ສ່ຽງທີ່ສຸດ ຕະຫຼອດເຖິງປະຊາກອນຜູ້ຖືກເຄາະຮ້າຍ ແທນທີ່ຈະດຳເນີນການ 'ແບບຄົບຖ້ວນຮອບດ້ານແລະຄົບວົງຈອນ' ເຊິ່ງອາດຈະເຮັດໃຫ້ຄວາມພະຍາຍາມ ແລະຊັບພະຍາກອນແຜ່ກວມອອກໄປຫຼາຍຈົນເກີດສະພາບມີບໍ່ພຽງພໍ. ພ້ອມນັ້ນຍັງຈຳເປັນຕ້ອງມີ**ການປະເມີນຜົນ**ຢ່າງພາວະວິໄສເພື່ອຮັບປະກັນວ່າ: ບັນດາກິດຈະກຳຊ່ວຍເຫຼືອ ຍັງຄົງມີເປົ້າໝາຍແນ່ນອນ ແລະ ສ້າງຜົນກະທົບທາງບວກຕາມທີ່ຕັ້ງໃຈເອົາໄວ້.
3. **ການກົດຂີ່ຂູດຮີດ** ແລະ ການກັກຂັງເປັນທາດ ຄວນເປັນເປົ້າໝາຍໃນການດຳເນີນງານຂອງພວກເຮົາ ໂດຍຮັບຮູ້ວ່າ: ການຂົນສົ່ງໃນຂະບວນການຄ້າມະນຸດຢູ່ອາຊີຕາເວັນອອກສຽງໃຕ້ນັ້ນມັກຈະເປັນພຽງແຕ່ປັດໄຈສຳຮອງ ແລະ ບາງຄັ້ງເຫັນວ່າ: ບໍ່ແມ່ນປັດໄຈກ່ຽວຂ້ອງຊໍ້າ.
4. **ການບັງຄັບປະຕິບັດກົດໝາຍ** ຄວນແນເປົ້າໝາຍໃສ່ຜູ້ທີ່ກະທຳຜິດຄະດີຄ້າມະນຸດ ແລະ ທຸກຄະດີທີ່ກ່ຽວຂ້ອງໂດຍຄຳຕັດສິນຄວນມີສັດສ່ວນຕາມຄວາມຜິດໃນອາດຊະຍາກຳຕ່າງໆ.
5. ການຊ່ວຍເຫຼືອຜູ້ຖືກເຄາະຮ້າຍ ຄວນຖືກອອກແບບມາເພື່ອຕອບສະໜອງ**ຄວາມຕ້ອງການຂອງຜູ້ຖືກເຄາະຮ້າຍແຕ່ລະຄົນມາເປັນອັນດັບໜຶ່ງ** ແລະ ຄວາມຕ້ອງການຢາກດຳເນີນຂະບວນການຍຸຕິທຳທາງອາຍາ (ແລະ ອື່ນໆ) ມາເປັນອັນດັບສອງ.

## *ພາກ 1: ການທັບມ້າງຄວາມເຂົ້າໃຈຜິດ*

ພາກທຳອິດ ໄດ້ກຳນົດລວມຄວາມເຂົ້າໃຈຜິດຕ່າງໆທີ່ພົວພັນກັບບັນຫາການຄ້າມະນຸດ ແລະ ລັກສະນະທີ່ຄວາມເຂົ້າໃຈຜິດເຫຼົ່ານັ້ນສົ່ງຜົນຕໍ່ການຕອບໂຕ້ການຄ້າມະນຸດຂອງພວກເຮົາໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້. ການສົນທະນາໃນພາກນີ້ ເລີ່ມຕົ້ນດ້ວຍວິດີໂອສຳພາດຂອງ MTV 10 ຕອນ ທີ່ໄດ້ສຳພາດຜູ້ຄົນຕາມທ້ອງຖະໜົນຕ່າງໆໃນບາງກອກ ເຊິ່ງໄດ້ສະໜອງມຸມມອງດ້ານເລິກກ່ຽວກັບບາງຄວາມເຂົ້າໃຈຜິດທີ່ຜູ້ຄົນມີກ່ຽວກັບບັນຫາການຄ້າມະນຸດ. ພາຍຫຼັງການສາຍວິດີໂອ, ຄະນະຊ່ຽວຊານນຳພາການສົນທະນາ ໄດ້ປັບຄວາມເຂົ້າໃຈຜິດເຫຼົ່ານັ້ນ ພ້ອມທັງຄວາມເຂົ້າໃຈຜິດອື່ນໆ ທີ່ຜູ້ເຂົ້າຮ່ວມໄດ້ຍົກຂຶ້ນຖາມ. ການສົນທະນາໃນພາກນີ້ ຍັງເນັ້ນໜັກຄວາມຈຳເປັນໃນການມີຂໍ້ມູນຂ່າວສານຕົວຈິງທີ່ເໝາະສົມ ແລະ ການປະເມີນຜົນເອກະລາດ - ທີ່ໃຫ້ຄວາມຈິງກ່ຽວກັບສະພາບການຄ້າມະນຸດ ແລະ ຂໍ້ພິສູດເດັດຂາດ ວ່າ ກິດຈະກຳຊ່ວຍເຫຼືອຕ່າງໆ ກຳລັງສ້າງຄວາມແຕກຕ່າງ. ບາງຄວາມເຂົ້າໃຈຜິດທີ່ຖືກ "ທັບມ້າງ" ລວມມີຄື:

- **<u>ຄວາມເຂົ້າໃຈຜິດ: ການຄ້າມະນຸດ ສ່ວນໃຫຍ່ມີສາເຫດມາຈາກບັນຫາຄວາມທຸກຍາກແລະການຂາດການສຶກສາ.</u>**

  **ຄວາມເປັນຈິງ**: ການຕົກຢູ່ໃນທ່າສ່ຽງຕໍ່ການຄ້າມະນຸດບໍ່ໄດ້ເກີດຈາກປັດໃຈງ່າຍໆສະເໝີໄປເຊັ່ນວ່າເປັນພຽງຍ້ອນບັນຫາຄວາມທຸກຍາກ ແລະ ການຂາດການສຶກສາ ເຊິ່ງເປັນໂຕທີ່ກະຕຸກຊຸກຍູ້ຜູ້ຄົນໃຫ້ພາ ກັນເຄື່ອນຍ້າຍຖິ່ນຖານ ຫຼື ສະແຫວງຫາໂອກາດເພື່ອປັບປຸງຊີວິດການເປັນຢູ່ຂອງຕົນ. ຂໍ້ສົມມຸດຖານທົ່ວໄປພົບວ່າ ນຳໃຊ້ບໍ່ໄດ້ກັບພາກພື້ນນີ້ ຫຼື ບາງທີອາດຈະນຳໃຊ້ກັບພາກພື້ນອື່ນບໍ່ໄດ້ເຊັ່ນກັນ. ປັດໃຈສ່ຽງແທ້ຈິງ - ບາງທີຄວາມບໍ່ສາມາດເຂົ້າເຖິງ ຫຼື ຄວາມບໍ່ສາມາດທີ່ຈະນຳໃຊ້ກົນໄກເຄື່ອນຍ້າຍແຮງງານທາງການ, ຄວາມປາຖະໜາຢາກນຳໃຊ້ປະໂຫຍດຈາກ ການສຶກສາ ແລະ ທັກສະທີ່ມີ ແຕ່ໂອກາດພາຍໃນທ້ອງຖິ່ນ/ປະເທດ ຊໍ້າພັດບໍ່ເອື້ອອຳນວຍ, ບັນຫາການຂາດສະຖານະພາບຂອງການເປັນພົນລະເມືອງ ຫຼື ຄວາມບໍ່ສາມາດເຂົ້າເຖິງເງິນກູ້ເພື່ອໃຊ້ປິ່ນປົວສຸຂະພາບໃນຍາມສຸກເສີນ ຫຼື ເງິນດ່ວນເມື່ອສຳມະຊິກໃນຄອບຄົວເຈັບປ່ວຍ - ບັນຫາຕ່າງໆ ເຫຼົ່ານີ້ຈຳເປັນຕ້ອງໄດ້ຮັບການສຶກສາ ແລະ ພິສູດ ກ່ອນທີ່ຈະອອກແບບກິດຈະກຳຊ່ວຍເຫຼືອໃດໜຶ່ງໃຫ້ແທດເໝາະ.

- **<u>ຄວາມເຂົ້າໃຈຜິດ: ເຄືອຂ່າຍອາດຊະຍາກອນຂະໜາດໃຫຍ່ ແລະ ມີການຈັດຕັ້ງເປັນໂຕຂັບເຄື່ອນບັນຫາການຄ້າມະນຸດຢູ່ພາກພື້ນອາຊີ ຕາເວັນອອກສ່ຽງໃຕ້.</u>**

  **ຄວາມເປັນຈິງ**: ເກືອບວ່າທົ່ວພາກພື້ນອາຊີຕາເວັນອອກສ່ຽງໃຕ້, ເຄືອຂ່າຍອາດຊະຍາກອນຄ້າມະນຸດມີຮູບແບບ ການຈັດຕັ້ງທີ່ບໍ່ແໜ້ນໜາ ເຊິ່ງເຫັນວ່າເປັນເລື່ອງຍາກທີ່ຈະຕິດຕາມເບິ່ງສາຍພົວພັນລະຫວ່າງພາກສ່ວນກ່ຽວຂ້ອງ. ເຄືອຂ່າຍທີ່ມີຢູ່ໂດຍທົ່ວໄປ ແມ່ນມີຂະໜາດນ້ອຍ ແລະ ເປັນການດຳເນີນການແບບສວຍໂອກາດ ຫຼາຍກວ່າທີ່ຈະເປັນຂະບວນການທີ່ມີການຈັດຕັ້ງທີ່ເຂັ້ມແຂງ.

- **<u>ຄວາມເຂົ້າໃຈຜິດ: ການຄ້າມະນຸດ ພົວພັນກັບແມ່ຍິງແລະເດັກຍິງເປັນສ່ວນໃຫຍ່ ເຊິ່ງເປັນຜູ້ທີ່ຖືກກົດຂີ່ຂູດຮີດພາຍໃນອຸດສາຫະກຳບໍລິການທາງເພດ.</u>**

  **ຄວາມເປັນຈິງ**: ອັດຕາສ່ວນທີ່ໃຫຍ່ຂອງການຄ້າມະນຸດ ແມ່ນເພື່ອຈຸດປະສົງກົດຂີ່ຂູດຮີດແຮງງານ ໂດຍມີທັງຜູ້ຊາຍ, ແມ່ຍິງແລະເດັກນ້ອຍເປັນຜູ້ຖືກເຄາະຮ້າຍ. ການຄ້າມະນຸດ ບໍ່ແມ່ນພຽງເພື່ອກົດຂີ່ຂູດຮີດທາງເພດຢ່າງດຽວ, ພົບວ່າມີການບັງຄັບໃຫ້ອອກແຮງງານ ແລະ ການປະຕິບັດທີ່ຄ້າຍຄືກັບທາດພາຍໃນແວດລ້ອມການອອກແຮງງານທີ່ຫຼາກຫຼາຍ ເຊິ່ງໃນນັ້ນລວມທັງ ໂຮງງານທີ່ກົດຂີ່ຂູດຮີດແຮງງານ, ການເຮັດວຽກຮັບໃຊ້ຄືທາດຢູ່ຕາມຄົວເຮືອນ, ການປະມົງ ແລະ ຕາມໄຮ່ປູກຝັງຕ່າງໆ. ເຖິງຈະມີຄວາມເປັນຈິງຄືດັ່ງກ່າວນີ້ກໍ່ຕາມ, ກົດໝາຍແຫ່ງຊາດຂອງບາງປະເທດພາຍໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້ ຍັງຄົງຈຳກັດຄຳນິຍາມການຄ້າມະນຸດພຽງແຕ່ເປັນການກະທຳຜິດກັບແມ່ຍິງແລະເດັກນ້ອຍເທົ່ານັ້ນ.

- **<u>ຄວາມເຂົ້າໃຈຜິດ: ຖ້າມີການຄວບຄຸມລຽບຕາມຊາຍແດນເຄັ່ງຄັດຂຶ້ນກວ່າເດີມ, ກໍ່ຈະສາມາດຫຼຸດບັນຫາ ການຄ້າມະນຸດລົງໄດ້.</u>**

  **ຄວາມເປັນຈິງ**: ການຄວບຄຸມລຽບຕາມຊາຍແດນທີ່ເຄັ່ງຄັດຂຶ້ນກວ່າເດີມ ບໍ່ສາມາດຕ້ານການຄ້າມະນຸດໄດ້. ດ້ວຍການຄວບຄຸມທີ່ເຄັ່ງຄັດຂຶ້ນກວ່າເດີມ, ຜູ້ເຄື່ອນຍ້າຍຖິ່ນຖານເພື່ອສະແຫວງຫາໂອກາດທາງເສດຖະກິດທີ່ດີກວ່າ ອາດຈະຖືກບີບໃຫ້ຕ້ອງເປັນໜີ້ເປັນສິນຈຳນວນມະຫາສານ ຫຼື ມີຄວາມສ່ຽງທີ່ຈະຕົກຢູ່ພາຍໃຕ້ກຳມື ຂອງພວກຄ້າມະນຸດຫຼາຍຂຶ້ນກວ່າເດີມ ຍ້ອນຕ້ອງການຢາກຫຼົບລີ້ ອຳນາດການປົກຄອງ ໃນກໍລະນີເຂົາເຈົ້າບໍ່ສາມາດເຂົ້າເຖິງວິທີການເຄື່ອນຍ້າຍແບບປອດໄພກວ່າໄດ້.

- **<u>ຄວາມເຂົ້າໃຈຜິດ: ວິທີການດຳເນີນງານແບບຄົບວົງຈອນ, ຄົບຖ້ວນຮອບດ້ານ ແລະ ເນັ້ນໜັກການພັດທະນາ ແມ່ນວິທີດຽວທີ່ຈະແກ້ໄຂບັນຫາການຄ້າມະນຸດ.</u>**

  **ຄວາມເປັນຈິງ**: ໃນຂະນະທີ່ວິທີດັ່ງກ່າວນີ້ ຟັງເບິ່ງຄືດີ, ແຕ່ໃນຄວາມເປັນຈິງ ວິທີດຳເນີນງານແບບນີ້ ມີທ່າອ່ຽງນຳໃຊ້ຄ່າໃຊ້ຈ່າຍສູງຈົນເກີນໄປ ແລະ ບໍ່ສາມາດປະຕິບັດໄດ້ໃນຕົວຈິງເພື່ອສ້າງໃຫ້ເກີດຄວາມແຕກຕ່າງໃນການແກ້ໄຂບັນຫາການຄ້າມະນຸດ. ພວກເຮົາ ບໍ່ຕ້ອງການວິທີການດຳເນີນງານ 'ແບບຄົບຖ້ວນຮອບດ້ານ' ທີ່ເຮັດໃຫ້ຄວາມ ພະຍາຍາມແຜ່ຂະຫຍາຍກວມເອົາຂອບເຂດກວ້າງຂວາງຫຼາຍໂພດຈົນບໍ່ພຽງພໍທີ່ຈະສ້າງຄວາມແຕກຕ່າງໃຫ້ເກີດຂຶ້ນໄດ້. ພວກເຮົາຈຳເປັນຕ້ອງມີເປົ້າໝາຍ ແລະ ມີຍຸດທະສາດ ເຊິ່ງມັນຮຽກຮ້ອງໃຫ້ມີຫຼັກຖານຕົວຈິງທີ່ໜ້າເຊື່ອຖື. ພວກເຮົາຍັງຕ້ອງຮັບຮູ້ວ່າ ການຄ້າມະນຸດໃນໂຕມັນເອງ ກໍ່ຖືວ່າເປັນອາດຊະຍາກຳຢ່າງໜຶ່ງ, ດັ່ງນັ້ນ ຈຶ່ງຈຳເປັນຕ້ອງມີການຕອບໂຕ້ ຜ່ານທາງລະບົບຍຸຕິທຳທາງອາຍາທີ່ເຂັ້ມແຂງໄປຄຽງຄູ່ກັບບັນດາມາດຕະການພັດທະນາ.

- **<u>ຄວາມເຂົ້າໃຈຜິດ: ຖ້າພວກເຮົາ ສາມາດຈັບ 'ພວກຄ້າມະນຸດ' ໄດ້ໝົດທຸກຄົນ ແລ້ວເອົາເຂົາເຈົ້າໄປຂັງຄຸກ, ບັນຫາ ກໍ່ຈະຫາຍໄປ.</u>**

  **ຄວາມເປັນຈິງ**: ການສຸມຄວາມພະຍາຍາມເປັນສ່ວນໃຫຍ່ໃສ່ຜູ້ຕົວຍົວະ, ຫຼອກລວງ ແລະ ຂົນສົ່ງບຸກຄົນໃຫ້ໄປຕົກໃນສະພາບຖືກກົດຂີ່ຂູດຮີດນັ້ນ ຈະແກ້ໄຂບັນຫາດັ່ງກ່າວນີ້ໄດ້ພຽງສ່ວນໜຶ່ງເທົ່ານັ້ນ. ເພື່ອແກ້ໄຂຄວາມຕ້ອງການທີ່ແທ້ຈິງທີ່ພົວພັນກັບການຄ້າມະນຸດ, ການຕອບໂຕ້ ຕ້ອງລວມເອົາການເນັ້ນໜັກໃສ່ພວກກົດຂີ່ຂູດຮີດຕົວຈິງ ແລະ ພວກກັກຂັງຄົນເປັນທາດໃຫ້ຫຼາຍຂຶ້ນກວ່າເດີມ - ໝາຍເຖິງຜູ້ທີ່ເປັນເຈົ້າຂອງ ແລະ ດຳເນີນທຸລະກິດເຊິ່ງກັກຂັງຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃຫ້ເປັນທາດ.

## *ພາກ 2: ຜູ້ຖືກເຄາະຮ້າຍ*

ມີການຄາດຄະເນວ່າ: ໃນພາກພື້ນນີ້ ມີຜູ້ຖືກເຄາະຮ້າຍຫຼາຍ ພັນຄົນ (ອາດຈະຫຼາຍກວ່ານີ້) ແຕ່ມີພຽງສ່ວນໜ້ອຍໜຶ່ງທີ່ຖືກລະບຸໂຕ ແລະ ໄດ້ຮັບການຊ່ວຍເຫຼືອ. ຄຳຖາມພື້ນຖານຂອງການສົນທະນາໃນພາກນີ້ ແມ່ນ - *ເປັນຫຍັງ ແລະ ເຮັດແນວໃດ ເຮົາຈຶ່ງຈະສາມາດດຳເນີນການໃຫ້ດີຂຶ້ນກວ່າເດີມ?* ພາຍ ຫຼັງການສາຍວີດີໂອປະ ຫວັດ ຂໍ້ມູນຂອງຜູ້ຖືກເຄາະຮ້າຍສາມຄົນ, ການສົນທະ ນາໃນພາກນີ້ ໄດ້ນຳສະເໜີບົດສະເໜີທີ່ໜ້າຄົ້ນຄິດຂອງຄະນະປະທານ ໂດຍໄດ້ເນັ້ນໜັກ ຄວາມຕ້ອງການໃຫ້ມີການຮັບປະກັນຄວາມປອດໄພ ແລະ ທາງເລືອກຂອງຜູ້ຖືກເຄາະຮ້າຍນັບແຕ່ການຖືກເຮັດໃຫ້ກາຍເປັນຜູ້ຖືກເຄາະຮ້າຍ ໄປຈົນເຖິງ ການຊ່ວຍເຫຼືອກັບຄືນເຂົ້າສູ່ສັງຄົມ.



*ເຮືອປະມົງທີ່ອອກທະເລເປັນໄລຍະເວລາດົນ ຖືກລະບຸວ່າອາດຈະເປັນປາຍທາງຂອງການຄ້າຜູ້ຊາຍ*

ການສົນທະນາໃນພາກນີ້ ຍັງຊ່ວຍໃຫ້ຜູ້ເຂົ້າຮ່ວມເຂົ້າໃຈກຸ່ມ ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດວ່າ: ກຸ່ມໃດທີ່ພວກເຮົາສາມາດເຂົ້າເຖິງໄດ້, ກຸ່ມໃດທີ່ພວກເຮົາມີຄວາມຫຍຸ້ງຍາກໃນການຊ່ວຍເຫຼືອ ເນື່ອງຈາກຂໍ້ຈຳກັດຂອງຂອບນິຕິບັນຍັດທີ່ມີຢູ່ໃນປະຈຸບັນ, ແລະ ບັນຫາຕ່າງໆທີ່ພົວພັນກັບຄຳນິຍາມ. ບາງທັດສະນະໃຫ້ຄຳຄິດເຫັນວ່າ ເປັນຫຍັງຈຶ່ງມີຜູ້ຖືກເຄາະຮ້າຍພຽງຈຳນວນໜ້ອຍໜຶ່ງ ທີ່ໄດ້ຮັບການຊ່ວຍເຫຼືອ ແລະ ເຮົາຈະສາມາດເຮັດໄດ້ດີກວ່າເດີມໄດ້ແນວໃດນັ້ນ ລວມມີ:

- ການຄ້າມະນຸດສ່ວນໃຫຍ່ ແມ່ນພົວພັນກັບການກົດຂີ່ຂູດຮີດແຮງງານ. ຖ້າກວດພົບກໍລະນີດັ່ງກ່າວ, ເຫັນວ່າ ມີໜ້ອຍກໍລະນີທີ່ຖືກກວດພົບໂດຍເຈົ້າໜ້າທີ່ຕໍາຫຼວດ (ເຊິ່ງເປັນຜູ້ທີ່ມີສິດອຳນາດໃນການ ຈັດການກັບອາດຊະຍາກຳຕ່າງໆ) ແລະ ສ່ວນໃຫຍ່ແມ່ນຖືກກວດພົບໂດຍພະນັກງານໃນຂະແໜງແຮງງານ, ສຶກສາ ຫຼື ສາທາ (ເຊິ່ງເປັນຜູ້ທີ່ບໍ່ມີສິດອຳນາດໃນການຈັດການກັບອາດຊະຍາກຳ).
- ການຄ້າມະນຸດ ມີຜູ້ຖືກເຄາະຮ້າຍທີ່ເປັນຜູ້ຊາຍ, ແມ່ຍິງ ແລະ ເດັກນ້ອຍ; ແຕ່ພາຍໃຕ້ກົດໝາຍແຫ່ງຊາດທີ່ມີຢູ່, ບໍ່ແມ່ນທຸກຄົນຖືກພິຈາລະນາວ່າເປັນຜູ້ຖືກເຄາະຮ້າຍ.
- ການທີ່ເຈົ້າໜ້າທີ່ແຖວໜ້າຂາດຄວາມເຂົ້າໃຈຕໍ່ບັນຫາການຄ້າມະນຸດ ໝາຍຄວາມວ່າ ຜູ້ຖືກເຄາະຮ້າຍຫຼາຍຄົນ ຖືກລະບຸໂຕຜິດວ່າເປັນພຽງແຮງງານເຄື່ອນຍ້າຍຜິດກົດໝາຍ, ດ້ວຍເຫດນັ້ນເຂົາເຈົ້າຈຶ່ງບໍ່ໄດ້ຮັບການຊ່ວຍເຫຼືອ. ບາງຄັ້ງເຂົາເຈົ້າ ກໍ່ຖືກຂັງ ແລະ ຖືກລົງໂທດ. ພ້ອມນັ້ນໂຄງຮ່າງນິຕິບັນຍັດທີ່ມີຢູ່ ຍັງອາດຈະບໍ່ສອດຄ່ອງກັບບັນດາ ສົນທິສັນຍາສາກົນ.
- ຜູ້ຖືກເຄາະຮ້າຍ ບໍ່ແມ່ນພຽງແຕ່ຄົນທຸກທີ່ບໍ່ຮູ້ຈັກຫຍັງ ແລະ ຖືກນາຍໜ້າຫຼອກໃຫ້ເດີນທາງອອກຈາກບ້ານ. ມີຮູບແບບການຈັດຫາຕ່າງກັນຫຼາຍຮູບແບບ, ແຕ່ມັກພົບເປັນປະຈຳວ່າ ຜູ້ຖືກເຄາະຮ້າຍ ເລີ່ມຕົ້ນການເດີນທາງດ້ວຍຄວາມເຕັມໃຈໃນເບື້ອງຕົ້ນ ເຊິ່ງເຮັດໃຫ້ການລະບຸໂຕເຂົາເຈົ້າ ເປັນເລື່ອງທີ່ເຮັດໄດ້ຍາກ.



*ສູນຊ່ວຍເຫຼືອແມ່ຍິງ ແລະ ເດັກນ້ອຍຢູ່ກຳປູເຈຍ*

- ການປົກປ້ອງຜູ້ຖືກເຄາະຮ້າຍທີ່ມີລັກສະນະຊັກຊ້າ, ມີລັກສະນະອັນຕະລາຍ, ແລະ/ຫຼື ໄຮ້ປະສິດທິຜົນນັ້ນ ອາດຈະເຮັດໃຫ້ຜູ້ຖືກຄ້າມະນຸດປະຕິເສດ ໃຈບໍ່ສະແຫວງຫາ ຫຼື ຍອມຮັບການຊ່ວຍເຫຼືອຕັ້ງແຕ່ຕົ້ນ.
- ການເອົາຜູ້ຖືກເຄາະຮ້າຍຈາກຄ້າມະນຸດເຂົ້າສູນ ອາດຈະເຮັດໃຫ້ບັນຫາດ້ານຈິດຕະ-ສັງຄົມເຮັ່ງຮ້າຍກວ່າ ບັນຫາການຄ້າມະນຸດອີກ. ການຕອບສະໜອງຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດໃນລັກສະນະສ່ວນບຸກຄົນແລະສ້າງຄວາມໝັ້ນໃຈໃຫ້ແກ່ເຂົາເຈົ້ານັ້ນເປັນເລື່ອງຈຳເປັນໃນການຈັດການກັບຄວາມຕ້ອງການດ້ານຈິດຕະ-ສັງຄົມ ຂອງຜູ້ຖືກເຄາະຮ້າຍ.
- ຜູ້ຖືກເຄາະຮ້າຍ ອາດຈະຖືກກົດຂີ່ຂູດຮີດໃນລັກສະນະຕ່າງກັນ ແລະ ຫຼາຍຄົນອາດຈະບໍ່ລະບຸໂຕເອງວ່າ: 'ຖືກຄ້າມະນຸດ'

ບັນຫາສັງຄົມລັງກຽດທີ່ມີຕໍ່ຜູ້ຖືກເຄາະຮ້າຍຈາກການຄ້າມະນຸດ ຍັງອາດຈະເຮັດໃຫ້ຜູ້ຖືກເຄາະຮ້າຍຫຼາຍຄົນປະຕິເສດໃຈບໍ່ລະບຸໂຕເອງວ່າເປັນຜູ້ຖືກເຄາະຮ້າຍ. ຄວາມຮູ້ສຶກທີ່ວ່າເຂົາເຈົ້າຫຼົ້ມເຫຼວໃນການປະ ຕິບັດໜ້າທີ່ຂອງຕົນທີ່ມີ ຕໍ່ຄອບຄົວນັ້ນ ອາດຈະເຮັດໃຫ້ເຂົາເຈົ້າທຸກໃຈຫຼາຍຂຶ້ນ ກວ່າເດີມ.

## *ພາກ 3: ອາດຊະຍາກໍາ ແລະ ອາດຊະຍາກອນ*

ການສົນທະນາໃນພາກນີ້ ໄດ້ສາຍວີດີໂອຕົວຈິງຂອງວຽກງານຕ້ານການຄ້າມະນຸດເຊິ່ງເປັນວີດີໂອການດໍາເນີນການກວດຄົ້ນເພື່ອສ້າງປະຫວັດຂໍ້ມູນສະແດງໃຫ້ເຫັນຄວາມສະຫຼັບຊັບຊ້ອນຂອງບັນຫາການຄ້າມະນຸດໃນຖານະເປັນອາດຊະຍາກໍາໜຶ່ງ, ແລະ ສະແດງໃຫ້ເຫັນສະຖານທີ່ກົດຂີ່ຂູດຮີດໃນຖານະເປັນສະຖານທີ່ເກີດເຫດ ຫຼື ສະຖານທີ່ກະທໍາຜິດ. ເພື່ອຊ່ວຍສ້າງຄວາມເຂົ້າໃຈທີ່ເລິກເຊິ່ງຂຶ້ນກວ່າເດີມຕໍ່ບາງບັນຫາທີ່ຜະເຊີນໂດຍອີງການປະຕິບັດກົດໝາຍ, ການສົນ ທະນາໃນພາກນີ້ ຈຶ່ງໄດ້ເນັ້ນໜັກສິ່ງທີ່ສາມາດ ແລະ ບໍ່ສາມາດກໍານົດໄດ້ຢ່າງງ່າຍດາຍຢູ່ສະຖານທີ່ເກີດເຫດ. ໃນນັ້ນ ໄດ້ສຸມໃສ່ເງື່ອນໄຂການເຮັດວຽກຢູ່ສະຖານທີ່ເຮັດວຽກ, ການປະເມີນອາຍຸ, ສັນຍານຂອງການກົດຂີ່ຂູດຮີດ, ການເກັບກໍາຫຼັກຖານແລະເອກະສານ, ຄວາມກ່ຽວຂ້ອງ (ຫຼື ບໍ່ກ່ຽວຂ້ອງ) ຂອງນາຍໜ້າ, ແລະ ການອອກແຮງງານໃຊ້ໜີ້. ຄໍາຖາມສໍາຄັນທີ່ຖືກຍົກຂຶ້ນມາ ລວມມີ: *ແມ່ນໃຜເປັນອາດຊະຍາກອນໃນຄະດີຄ້າມະນຸດຢູ່ພາກພື້ນນີ້ ແລະ ເປັນຫຍັງຈໍານວນການດໍາເນີນຄະດີ ດັ່ງກ່າວ ຈຶ່ງຍັງມີໜ້ອຍ? ແມ່ນໃຜຖືກດໍາເນີນຄະດີ, ແລະ ແມ່ນໃຜຫຼຸດພົ້ນຈາກການຖືກລົງໂທດ?* ການສົນທະນາໃນພາກນີ້ ສິ້ນສຸດລົງດ້ວຍຄໍາຮ້ອງຂໍໃຫ້ມີການຕອບໂຕ້ດ້ານການປະຕິບັດກົດໝາຍທີ່ມີມາດຕະຖານແລະມີຈຸດສຸມຫຼາຍຂຶ້ນກວ່າເດີມໂດຍເປັນການຕອບໂຕ້ທີ່ພິຈາລະນາເອົາບັນດາຂໍ້ຄວາມດັ່ງຕໍ່ໄປນີ້:

- ຕາມປົກກະຕິແລ້ວ, ເມື່ອຫຼຽບໃສ່ 'ພວກຂິນສິ່ງ' ອາດຊະຍາກອນທີ່ໄດ້ຮັບຜົນປະໂຫຍດຫຼາຍສຸດ ຈາກການ ຄ້າມະນຸດ ແມ່ນເຈົ້າຂອງທຸລະກິດຕ່າງໆ ທີ່ຢູ່ປາຍທາງການກົດຂີ່ຂູດຮີດ.
- ມັກພົບເລື້ອຍໆວ່າ ນາຍໜ້າຈັດຫາແຮງງານເຄື່ອນຍ້າຍທີ່ບໍ່ໄດ້ຮັບອະນຸຍາດຕາມກົດໝາຍນັ້ນ ສ່ວນໃຫຍ່ແລ້ວ ເປັນພຽງແຕ່ຜູ້ທີ່ອໍານວຍຄວາມສະດວກໃຫ້ແກ່ການເດີນ ທາງ ຫຼາຍກວ່າເປັນຜູ້ຄ້າມະນຸດ.
- ຜູ້ຄ້າມະນຸດໃນພາກພື້ນນີ້ ອາດຈະບໍ່ມີການດໍາເນີນການແບບເປັນເຄືອຄ່າຍອາດຊະກອນທີ່ມີການຈັດຕັ້ງໃນລະ ດັບສູງ.
- ພົບເລື້ອຍໆວ່າ ຜູ້ຄ້າມະນຸດ ແລະ ຜູ້ກົດຂີ່ ຂູດຮີດ ມັກມີສາຍພົວພັນກັບກຸ່ມຄົນທີ່ມີ ຕໍາແໜ່ງອໍານາດ, ດ້ວຍເຫດນັ້ນ ຖືວ່າເຂົາເຈົ້າເຫຼົ່ານັ້ນກໍ່ມີສ່ວນຮ່ວມໃນການຄ້າມະນຸດ. ການສົມຮູ້ຮ່ວມຄິດກະທໍາຜິດລະຫວ່າງເຈົ້າໜ້າທີ່, ຜູ້ຈັດຫາ ແລະ ຜູ້ໃຊ້ແຮງງານຮັບປະກັນວ່າ ມີພຽງແຕ່ອາດຊະຍາກອນຂັ້ນຕໍ່າ (ຫຼື ຜູ້ອໍານວຍຄວາມສະດວກໃນຂະບວນການຄ້າມະນຸດ ຫຼື ຜູ້ຮັບຜິດແທນ) ເທົ່ານັ້ນ ຖືກດໍາເນີນຄະດີ ຖ້າຫາກມີການສືບຕໍ່ຮ້ອງຟ້ອງດໍາເນີນຄະດີ.



*ໂປດສ໌ເຕີ ໂຄສະນາຈັດຫາແຮງງານຢູ່ແຂວງພາກເໜືອແຫ່ງໜຶ່ງໃນປະເທດໄທເພື່ອໄປເຮັດວຽກຢູ່ຕ່າງປະເທດ. ຖ້າການໂຄສະນາດັ່ງກ່າວ ຫາກນໍາໄປສູ່ການຈ້າງງານທີ່ກົດຂີ່ຂູດຮີດ ຫຼື ການບັງຄັບເປັນທາດ, ກໍ່ອາດຈະເປັນ ຫຼື ອາດຈະບໍ່ເປັນຄວາມຜິດຂອງຜູ້ຈັດຫາ ຫຼື ນາຍໜ້າຈັດຫາ ແລະ ຖ້າຫາກເປັນຄວາມຜິດຂອງຜູ້ຈັດຫາ, ຜູ້ກ່ຽວອາດຈະ ຫຼື ອາດຈະບໍ່ຖືກສັ່ງໃຫ້ຮັບຜິດຊອບ.*

## *ພາກ 4: ການປ້ອງກັນ*

ການປ້ອງກັນການຄ້າມະນຸດ ມັກຖືກກຳນົດເປົ້າໝາຍຜິດໄດ້ງ່າຍ. ໜຶ່ງໃນບັນດາຄຳຖາມພື້ນຖານທີ່ຈຳເປັນຕ້ອງໄດ້ຕອບ ໃນເວລາສົນທະນາຄົ້ນຄວ້າຫົວຂໍ້ດັ່ງກ່າວນີ້ແມ່ນ: *ແມ່ນຫຍັງແທ້ທີ່ໄດ້ຮັບການປ້ອງກັນຜ່ານການຈັດຕັ້ງປະຕິບັດບັນດາກິດຈະກຳທີ່ຫຼາກຫຼາຍໃນວຽກງານຕ້ານການຄ້າມະນຸດ?* ຄະນະຊ່ຽວຊານນຳພາການສົນທະນາ ໄດ້ສະເໜີການປະກາດບໍລິການພາກລັດ (PSAs), ລະຄອນຊີວິດເພື່ອປູກຈິດສຳນຶກ ແລະ ສື່ອື່ນໆ ເພື່ອເນັ້ນໜັກຄວາມແຕກຕ່າງລະຫວ່າງວິທີທີ່ພວກເຮົາເຄີຍດຳເນີນການປ້ອງກັນ ແລະ ໂຄສະນາ ກັບວິທີ ທີ່ພວກເຮົາຄວນເຮັດແຕ່ດຽວນີ້. ບັນດາຂໍ້ຄວາມສຳຄັນທີ່ຖືກກຳນົດໄວ້ໃນການສົນທະນາຂອງພາກນີ້ລວມມີ:

- ການປ້ອງກັນການເຄື່ອນຍ້າຍແຮງງານ/ຖິ່ນຖານ ບໍ່ແມ່ນການປ້ອງກັນການຄ້າມະນຸດ.
- ວິທີການຕ່າງກັນ ເຂົ້າເຖິງກຸ່ມເປົ້າໝາຍຕ່າງກັນ. ພ້ອມດຽວກັນນັ້ນ, ເຫັນໄດ້ແຈ້ງວ່າ: ພາສາຕ່າງກັນ ເຂົ້າເຖິງກຸ່ມເປົ້າໝາຍຕ່າງກັນ ຄົນເຮົາເຂົ້າໃຈສິ່ງທີ່ສື່ສານກັບເຂົາເຈົ້າໄດ້ຜ່ານສະເພາະແຕ່ເປັນພາສາຂອງເຂົາເຈົ້າ. ຮູ້ຈັກກຸ່ມເປົ້າໝາຍຂອງທ່ານ ແລະ ວິທີທີ່ທ່ານຕ້ອງການໃຫ້ເຂົາເຈົ້າຕອບສະໜອງ ຫຼື ດຳເນີນການໃດໜຶ່ງເພື່ອຕອບສະ ໜອງຕໍ່ຂໍ້ຄວາມຂອງທ່ານ.
- ຜົນດີຂອງການປ້ອງກັນຢູ່ເບື້ອງຕົ້ນທາງຈະບັນລຸໄດ້ກໍ່ຕໍ່ເມື່ອວ່າມີການກຳນົດເປົ້າໝາຍເປັນຢ່າງດີຕໍ່ກຸ່ມປະຊາກອນຍ່ອຍ ທີ່ເປັນຜູ້ສ່ຽງຕໍ່ການຖືກຄ້າມະນຸດຢ່າງແທ້ຈິງ; ລະດັບຄວາມສ່ຽງຂອງການຖືກຄ້າມະນຸດ ໃນທົ່ວກຸ່ມປະຊາກອນ ໃຫຍ່ ຍາກທີ່ຈະເທົ່າກັນ.
- ສຳລັບການປ້ອງກັນຢູ່ເບື້ອງປາຍທາງ, ທ່າແຮງບົ່ມຊ້ອນທີ່ຈະເກີດໝາກຜົນໄດ້ຮັບນັ້ນ ມີສູງຫຼາຍ ເນື່ອງຈາກການກຳນົດເປົ້າໝາຍເຮັດໄດ້ງ່າຍກວ່າ – ຕົວຢ່າງ: ແຮງງານເຄື່ອນຍ້າຍຢູ່ຕາມບັນດາ ໂຮງງານກິດຂີ່ຂູດຮີດທີ່ຮູ້ຈັກແລ້ວ. ແຕ່ທ່າແຮງບົ່ມຊ້ອນທີ່ຈະເຮັດໃຫ້ເກີດຜົນເສຍ ກໍ່ມີສູງເຊັ່ນກັນ ດ້ວຍການຊ່ວຍເຫຼືອປົກປ້ອງໂດຍກົງທີ່ບໍ່ເໝາະສົມ ຫຼື ບໍ່ພຽງພໍສຳລັບປະຊາຊົນທີ່ຢູ່ໃນ ແລະ/ຫຼື ໃກ້ແວດລ້ອມທີ່ມີການກົດຂີ່ຂູດຮີດ.
- ຄວາມຮັບຮູ້ ຫຼື ຈິດສຳນຶກກ່ຽວກັບຄວາມສ່ຽງຂອງການຖືກຄ້າມະນຸດ ບໍ່ຈຳເປັນວ່າຈະຊ່ວຍປ້ອງກັນໃຫ້ບຸກຄົນໃດໜຶ່ງຖືກຄ້າມະນຸດໄດ້ໃນຕົວຈິງ. ຕ້ອງເຂົ້າໃຈວິທີທີ່ຄົນເຮົາຊັ່ງຊາຄວາມສ່ຽງທີ່ເຂົາເຈົ້າ ເຂົ້າໃຈດ້ວຍເຫດດ້ວຍຜົນ ກັບໂອກາດທີ່ເຂົາເຈົ້າຫຼິງເຫັນພາຍໃນແວດລ້ອມສັງຄົມ, ການເມືອງ ແລະ ເສດຖະກິດວ່າມີຄືແນວໃດ.




*ຂໍ້ຄວາມປູກຈິດສຳນຶກຂອງອົງການ UNESCO ສຳລັບພາກສ່ວນຕ່າງໆນັບແຕ່ປະຊາກອນຊົນເຜົ່າສ່ວນນ້ອຍທີ່ເປັນກຸ່ມສ່ຽງ ໄປຈົນເຖິງລະດັບ ຜູ້ສ້າງນະໂຍບາຍ (ເບື້ອງຊ້າຍ); ການໂຄສະນາປຸກລະດົມຂອງ MTV EXIT ASIA ເພື່ອຍຸຕິການກົດຂີ່ຂູດຮີດ ແລະ ການຄ້າມະນຸດຢູ່ອາຊີ (ເບື້ອງຂວາ).*

## *ພາກ 5: ບູລິມະສິດຕ້ານການຄ້າມະນຸດ*

ການສົນທະນາພາກນີ້ ໄດ້ຍົກຄວາມສຳຄັນຂອງການຈັດບູລິມະສິດບັນດາຄວາມພະຍາຍາມຂອງພວກເຮົາ ເພື່ອກ້າວໄປສູ່ການບັນລຸວິໄສທັດຮ່ວມກັນ. ມີແຕ່ດ້ວຍການຈັດບັນດາກິດຈະກຳຊ່ວຍເຫຼືອໂດຍລວມຂອງພວກເຮົາ ໃຫ້ເປັນເອກະພາບກັນ, ພວກເຮົາ ຈຶ່ງຈະສາມາດບັນລຸ ການມີແນວໜ້າທີ່ເປັນເອກະພາບກັນ ເຊິ່ງເປັນສະພາບທີ່ບັນດາອົງການຕ່າງໆ ຈະເຮັດວຽກຮ່ວມກັນເພື່ອສ້າງຜົນກະທົບໃຫ້ໄດ້ສູງສຸດໃນຄວາມພະຍາຍາມ ຕ້ານການຄ້າມະນຸດ. ຈາກການສົນທະນາໃນພາກນີ້, ຮູ້ສຶກວ່າມີຄວາມຈຳເປັນຮີບດ່ວນທີ່ຕ້ອງ:

- ປັບປຸງຂໍ້ມູນຂ່າວສານ ແລະ ການວິເຄາະກ່ຽວກັບການຄ້າມະນຸດ ແລະການຕ້ານການຄ້າມະນຸດ: ຢູ່ຕົ້ນທາງ, ປາຍທາງ, ເສັ້ນທາງຜ່ານ; ຜູ້ຖືກເຄາະຮ້າຍ ແລະ ຜູ້ຄ້າມະນຸດ; ແລະ ແບບວິທີປະຕິບັດທັງດີ ແລະ ບໍ່ດີ ທີ່ສາມາດວັດແທກໄດ້.
- ມີການຕອບໂຕ້ທີ່ເປັນເອກະພາບກັນໃນວົງສາທາລະນະຍາດຕ້ານການຄ້າມະນຸດໂດຍອີງຕາມຫຼັກຖານທີ່ເກັບກຳມາ ໄດ້ ແລະ ການວາງແຜນດຳເນີນງານຮ່ວມກັນ.
- ເສີມສ້າງຄວາມເຂັ້ມແຂງ ແລະ ເຮັດໃຫ້ການດຳເນີນຄະດີເປັນເອກະພາບກັນຕໍ່ຜູ້ກົດຂີ່ຂູດຮີດທີ່ຊົ່ວຊ້າທີ່ສຸດໃນບັນດາ ອຸດສາຫະກຳ/ຂົງເຂດທີ່ຮູ້ວ່າມີການກົດຂີ່ຂູດຮີດ ໄປຄຽງຄູ່ກັບການຊ່ວຍເຫຼືອຜູ້ຖືກເຄາະຮ້າຍຢ່າງເໝາະສົມ ໂດຍເນັ້ນໃສ່ສິດທິຂອງເຂົາເຈົ້າ. ການປົວແປງທາງແພ່ງ ແລະ ການຍຶດຊັບສິນ ກໍ່ຄວນມີການດຳເນີນການຢ່າງເດັດຂາດ ເພື່ອຊົດເຊີຍແກ່ຜູ້ຖືກເຄາະຮ້າຍ, ລົງໂທດຜູ້ຄ້າມະນຸດ ແລະ ປ່ຽນພຶດຕິກຳຄົນອື່ນບໍ່ໃຫ້ກະທຳຜິດອາດຊະຍາກຳດັ່ງກ່າວນີ້.

- ມີຄວາມເຂົ້າໃຈທີ່ດີຂຶ້ນກວ່າເດີມຕໍ່ບັນດາປັດໃຈທີ່ຫຼາກຫຼາຍ ເຊິ່ງປະກອບສ່ວນເຂົ້າໃນຄວາມສ່ຽງຕໍ່ການຖືກຄ້າມະນຸດໃນບັນດາຂົງເຂດຕ່າງໆ ເພື່ອເຮັດແນວໃດໃຫ້ສາມາດແນເປົ້າໝາຍແກ້ໄຂ ໃຫ້ໄດ້ຢ່າງມີປະສິດທິຜົນ.

## *ເຄື່ອງມືເພື່ອຊ່ວຍຜູ້ໃຫ້ທຶນ ກໍານົດເປົ້າໝາຍ ແລະ ປະສານງານໃນຂອດຊັບພະຍາກອນ*
## *ກ່າວປິດໂດຍ ທ່ານ ແມັດທິວ ຟຣິດແມນ , ຫົວໜ້າໂຄງການ UNIAP ປະຈໍາພາກພື້ນ*

"ຕະຫຼອດທົດສະວັດທີ່ຜ່ານມາ, ຜູ້ໃຫ້ທຶນຊ່ວຍເຫຼືອ ໄດ້ສະໜອງທຶນຈໍານວນສິບລ້ານໂດລາເຂົ້າໃນຂະແໜງຕ້ານການຄ້າມະນຸດເພື່ອແກ້ໄຂບັນຫາດັ່ງກ່າວ. ໃນຂະນະທີ່ບໍ່ເປັນອັນສົງໄສວ່າ ບັນດາສ່ວນບຸກຄົນແລະຊຸມຊົນຕ່າງໆ ໄດ້ຮັບຜົນປະໂຫຍດຈາກຊັບພະຍາກອນເຫຼົ່ານີ້, ແຕ່ມີຫຼາຍຄໍາຖາມພື້ນຖານທີ່ມັກຖາມຂຶ້ນກ່ຽວກັບຜົນກະທົບຈາກການຊ່ວຍເຫຼືອ ດັ່ງກ່າວເຊິ່ງໃນນັ້ນລວມມີ: *ພວກເຮົາດໍາເນີນການໄປໄດ້ໄກເທົ່າທີ່ຄວນຈະເປັນແລ້ວບໍ? ພວກເຮົາໄດ້ເຮັດໃຫ້ການຄ້າ ມະນຸດ ຫຼຸດລົງແລ້ວບໍ? ຖ້າເປັນຈິງ, ເຮັດໄດ້ຢູ່ໃສ, ວິທີໃດ ແລະ ຫຼຸດລົງໄດ້ຫຼາຍປານໃດແລ້ວ?* ເຫຼົ່ານີ້ຄືຄໍາຖາມທີ່ວົງສາຄະນາຍາດຕ້ານການຄ້າມະນຸດ ຄວນຖາມຕົນເອງທຸກມື້. ໃນຖານະເປັນພະນັກງານມືອາຊີບ, ພວກເຮົາຕ້ອງເປີດຮັບການສ່ອງດວງໄຟໃສ່ທຸກສິ່ງທີ່ພວກເຮົາເຮັດ ຫຼື ເປັນເປົ້າຮັບຟັງຄວາມຄິດເຫັນ. ພວກເຮົາຄວນພິຈາລະນາທັດສະນະມຸມມອງຈາກເພື່ອນຂອງພວກເຮົາທີ່ເບິ່ງວຽກຂອງພວກເຮົາ ແລະ ສຶກສາເບິ່ງລະອຽດ. ຖ້າຫາກເຮັດໄດ້ດີ, ກໍ່ໃຫ້ເຂົາເຈົ້າວ່າດີ. ຖ້າບໍ່ໄດ້ດີ, ກໍ່ໃຫ້ເຂົາເຈົ້າຕໍານິໄດ້ເຊັ່ນກັນ. ໃນທີ່ນີ້ບໍ່ແມ່ນເວທີສໍາລັບຄວາມຖືກຕ້ອງທາງການເມືອງ ແລະຄວາມສຸພາບເກງໃຈ ເມື່ອເວລາເວົ້າເລື່ອງການຮັບປະກັນວ່າ: ສິ່ງທີ່ເຮົາເຮັດນັ້ນມີຄວາມຄືບໜ້າ ແລະ ຊ່ວຍຜູ້ຄົນໃຫ້ຫຼາຍເທົ່າທີ່ຈະຫຼາຍໄດ້. ຖ້າແຜນງານໃດໜຶ່ງຫາກບໍ່ສະແດງຜົນໄດ້ຮັບ, ເຮົາຄວນຍຸຕິແຜນງານດັ່ງກ່າວ. ຖ້າແຜນງານຫາກບໍ່ບັນລຸສິ່ງທີ່ຕ້ອງເຮັດບັນລຸ ກໍ່ຄວນຢຸດຕິ. ຖ້າຫາກເປັນແຜນງານທີ່ມີມູນຄ່າໃຊ້ຈ່າຍສູງ ແລະ ບໍ່ສາມາດນໍາໄປປະຕິບັດໄດ້ຢູ່ບ່ອນອື່ນ, ກໍ່ບໍ່ຄວນສືບຕໍ່ ເວັ້ນເສຍແຕ່ວ່າມັນສະແດງໃຫ້ເຫັນຜົນກະທົບໃນທາງບວກທີ່ໜ້າປະທັບໃຈຫຼາຍ ເຖິງຂັ້ນຄຸ້ມຄ່າກັບການລົງທຶນໃສ່.

ສຸດທ້າຍນີ້, ພວກເຮົາ ໄດ້ສະໜອງລາຍການກວດສອບ ສໍາລັບຜູ້ໃຫ້ທຶນຊ່ວຍເຫຼືອແລະຜູ້ຕັດສິນບັນຫາ ໂດຍເປັນລາຍການແນະນໍາ ສິ່ງທີ່ຕ້ອງປະເມີນເມື່ອທົບທວນບົດສະເໜີກິດຈະກໍາຕ້ານການຄ້າມະນຸດ. ດ້ວຍຊັບພະຍາກອນ ທີ່ມີຢູ່ຈໍາກັດ ລາຍການກວດສອບໃນລັກສະນະດັ່ງກ່າວນີ້ ສາມາດຊ່ວຍກໍານົດເປົ້າໝາຍນໍາໃຊ້ຊັບ ພະຍາກອນໃຫ້ດີຂຶ້ນກວ່າເດີມເພື່ອໃຫ້ເກີດໝາກຜົນສູງສຸດ."

| ລາຍການສຳລັບກວດສອບບົດສະເໜີໂຄງການ/ກິດຈະກຳຕ້ານການຄ້າມະນຸດໃນແບບກະທັດຮັດ ສຳລັບຜູ້ໃຫ້ທຶນຊ່ວຍເຫຼືອນຳໃຊ້ພິຈາລະນາ | ແມ່ນ ຫຼື ບໍ່ແມ່ນ |
|---|---|
| ບົດສະເໜີດັ່ງກ່າວ ມີພື້ນຖານຂໍ້ມູນຕົວຈິງໜັກແໜ້ນບໍ? ເປັນບົດສະເໜີທີ່ຕັ້ງບົນພື້ນຖານຫຼັກຖານຕົວຈິງບໍ? | |
| ກິດຈະກຳຊ່ວຍເຫຼືອ ໄດ້ຮັບການປະເມີນຜົນເບິ່ງແລ້ວບໍ? ໄດ້ພິສູດປະສິດທິຜົນຂອງກິດຈະກຳຊ່ວຍເຫຼືອແລ້ວບໍ່ວ່າ: ຫຼຸດຜ່ອນການກົດຂີ່ຂູດຮີດ ຫຼື ສະໜັບສະໜູນໃຫ້ເກີດການປ່ຽນແປງພຶດຕິກຳບໍ? | |
| ມີຜູ້ມີບົດບາດ ຫຼື ອົງການອື່ນ ດຳເນີນກິດຈະກຳແບບດຽວກັນຢູ່ສະຖານທີ່ດຽວກັນກ່ອນແລ້ວບໍ? | |
| ກິດຈະກຳດັ່ງກ່າວ ສຸມໃສ່ການກົດຂີ່ຂູດຮີດທີ່ຊົ່ວຊ້າທີ່ສຸດ, ອາດຊະຍາກຳທີ່ກຳລັງປະກົດໂຕເປັນໄພຂົ່ມຂູ່ຫຼາຍທີ່ສຸດ, ຫຼື ປະຊາກອນກຸ່ມສ່ຽງທີ່ສຸດ, ນຳໃຊ້ກິດຈະກຳຊ່ວຍເຫຼືອທີ່ມີປະສິດທິຜົນຫຼາຍສຸດບໍ? | |
| ມີເວລາແລະທຶນພຽງພໍບໍເພື່ອເຮັດໃຫ້ກິດຈະກຳຊ່ວຍເຫຼືອສ້າງຄວາມແຕກຕ່າງທີ່ສະແດງໃຫ້ເຫັນໄດ້ໃນຕົວຈິງ? | |
| ບົດສະເໜີດັ່ງກ່າວ ມີຂອບຕິດຕາມກວດກາແລະການປະເມີນຜົນເພື່ອຕິດຕາມເບິ່ງຄວາມຄືບໜ້າບໍເພື່ອໃຫ້ອົງການຈັດຕັ້ງປະຕິບັດສາມາດຮຽນຮູ້ໄດ້ຢ່າງຕໍ່ເນື່ອງ ເມື່ອກິດຈະກຳຊ່ວຍເຫຼືອພັດທະນາໄປເລື້ອຍໆ? | |
| ກິດຈະກຳຊ່ວຍເຫຼືອດັ່ງກ່າວ ເຊື່ອມສານກັບກິດຈະກຳອື່ນໆບໍ ຫຼື ເປັນກິດຈະກຳທີ່ໂດດດ່ຽວ? | |
| ກິດຈະກຳຊ່ວຍເຫຼືອດັ່ງກ່າວ ມີຄວາມເໝາະສົມທາງດ້ານວັດທະນະທຳແລະພາສາບໍ? ດ້ານດັ່ງກ່າວຖືກປະເມີນຄືແນວໃດ? | |
| ໂຄງການດັ່ງກ່າວ ຄ່ອຍໆເຊື່ອມຊຶມຄວາມຮູ້ສຶກອັນຮີບດ່ວນບໍ? | |
| ໂຄງການດັ່ງກ່າວ ມີການຊ່ວຍເຫຼືອທາງວິຊາການທີ່ຈຳເປັນເພື່ອຕອບສະໜອງໃຫ້ໄດ້ຕາມມາດຕະຖານສາກົນບໍ? | |
| ໂຄງການດັ່ງກ່າວ ຈະສາທິດໃຫ້ເຫັນຜົນກະທົບທີ່ສາມາດວັດແທກໄດ້ແລະມີລັກສະນະຍືນຍົງບໍໃນການແກ້ໄຂບັນຫາການຄ້າມະນຸດ? ມີການກຳນົດຄາດໝາຍຜົນໄດ້ຮັບເອົາໄວ້ບໍ? | |

**ຖ້າມີຄຳຖາມ ຫຼື ຄຳເຫັນກ່ຽວກັບບົດລາຍງານ SIREN, ກະລຸນາຕິດຕໍ່ທ່ານ ພອລ ບາກລີ *(Paul Buckley)* ໄດ້ທີ່:** paul.buckley@undp.org.

# SIREN

**ຍຸດທະສາດການ ໂຕ້ຕອບດ້ວຍເຄືອຂ່າຍ ຂໍ້ມູນຂ່າວສານ (SIREN)**
**ໂຄງການ ເຄືອຂ່າຍຕ້ານການຄ້າມະນຸດ ຂອງອົງການ ສປຊ (UNIAP): ໄລຍະ III**

**ສະພາບຕ້ານການຄ້າມະນຸດ: ຄະນະຊ່ຽວຊານນຳພາການສົນທະນາ**
***ພິທີກອນ: ແມັດທິວ ຟີຣແມນ (Matthew Friedman) (UNIAP)***

## ພາກສົນທະນາພາກທັບມ້າງຄວາມເຂົ້າໃຈຜິດ

| | |
|---|---|
| ດຣ. ເດວິດ ເຟັນໂກລ *(Dr David Feingold)* (UNESCO) | ດຣ. ໄຊມອນ ເບັກເກີ *(Dr Simon Baker)* (UNESCO) |

## ພາກສົນທະນາພາກຜູ້ຖືກເຄາະຮ້າຍ

| | |
|---|---|
| ແລນສ໌ ບອນໂນ *(Lance Bonneau)* (IOM)<br>ຊອນ ເດີວາຍ *(Sean Devine)* (IOM) | ຄາເຣັນ ສະມິດທ໌ *(Karen Smith)* (ສູນຊີວິດໃໝ່-New Life Center) |

## ພາກສົນທະນາພາກອາດຊະຍາກຳແລະອາຊະຍາກອນ

| | |
|---|---|
| ດຣ. ລີຊາ ເຣັນເດ ເທເລີ (Dr Lisa Rende Taylor) (UNIAP)<br>ພໍ ບັກລີ *(Paul Buckley)* (UNIAP)<br>ວັນໄຊ ຣູຈະນະວົງ *(Wanchai Roujanavong)* (FACE, ປະເທດໄທ) | ອີຣີເນວ ໂກໂຄດສ໌ *(Irinel Cocos)* (ARTIP)<br>ອາວ ມອດສ໌ໂຄວິດສ໌ *(Al Moskowitz)* (ARTIP) |

## ສົນທະນາພາກການປ້ອງກັນ

| | |
|---|---|
| ດຣ. ເດວິດ ເຟັນໂກລ *(Dr David Feingold)* (UNESCO) ແອນເດີສ໌ ລິດສ໌ບອກ໌ *(Anders Lisborg)* (ILO) | ໄຊມອນ ກ໋ອບ (Simon *Goff)* (MTV)<br>ຊາວສ໌ ແຮມມີຕັນ *(Charles Hamilton)* (BBC World Service Trust) |

## ການສົນທະນາພາກບູລິມະສິດຕ້ານການຄ້າມະນຸດ

| | |
|---|---|
| ດຣ. ລີຊາ ເຣັນເດີ ເທເລີ *(Dr Lisa Rende Taylor)* (UNIAP)<br>ທີຕິດສ໌ ແມນກາຮາດສ໌ *(Thetis Mangahas)* (ILO) | ແລນສ໌ ບອນໂນ *(Lance Bonneau)* (IOM)<br>ອາວ ມອດສ໌ໂຄວິດສ໌ *(Al Moskowitz)* (ARTIP) |

**ຍຸດທະສາດການ ໂຕ້ຕອບດ້ວຍເຄືອຂ່າຍ ຂໍ້ມູນຂ່າວສານ (SIREN) ເປັນຂໍ້ລິເລີ່ມທີ່ໄດ້ຮັບການຊ່ວຍເຫຼືອຈາກ:**

**ໂຄງການ UNIAP**
**ຫ້ອງການບໍລິຫານໂຄງການປະຈຳພາກພື້ນ (UNIAP/PMO)**
**ຕຶກອົງການ ສປຊ, ຊັ້ນ 7, ບລັອກ B**
**ຖະໜົນຣາດສະດຳເນີນນອກ, ບາງກອກ 10200**
**ປະເທດໄທ**

**www.no-trafficking.org**